# WHAT'S ON THE CITY OF MINNEAPOLIS BALLOT ON NOVEMBER 2ND, 2021?

## ມີຂໍ້ສະເໜີຫຍັງແດ່ໃນບັດລົງຄະແນນຂອງເມືອງມິນນີແອໂປລິສ ໃນວັນທີ 2 ເດືອນພຶດສະຈິກາ ປີ 2021?

Elections for the City of Minneapolis are November 2, 2021. Offices on the ballot this year include Mayor, City Council, and Park & Recreation Board. Get more information about voting in Minneapolis at vote.minneapolismn.gov. For transportation and translation assistance, you can call the SEAD office for help at 612-987-7313 for Hmong, Khmer, Lao or Vietnamese interpreters.

ການເລືອກຕັ້ງສຳລັບເມືອງມິນນີແອໂປລິສຖືກວັນທີ 2 ເດືອນພຶດສະຈິກາ ປີ 2021.
ຕຳແໜ່ງທີ່ເປີດແຂ່ງຂັນໃນບັດລົງຄະແນນປີນີ້ມີ ຮວມທັງເຈົ້າເມືອງ ຄະນະກຳມະການຂັ້ນເມືອງ
ແລະຄະນະກຳມະການພະແນກສວນສາທາລະນະແລະການຜ່ອນຜັນ.
ທ່ານຫາຂໍ້ມູນເພີ່ມເຕີມກ່ຽວກັບການເລືອກຕັ້ງໃນເມືອງມິນນີແອໂປລິສໄດ້ທີ່ vote.minneapolismn.gov.
ເພື່ອການຊ່ວຍເຫຼືອທາງດ້ານການໂດຍສານຫຼືການແປພາສາ, ທ່ານສາມາດຕິດຕໍ່ຫາຫ້ອງການ SEAD
ໄດ້ ທີ່ເບີໂທ 612-987-7313 ເພື່ອຂໍຄວາມຊ່ວຍເຫຼືອຈາກນາຍແປພາສາມົ້ງ ຂະເມນ ລາວ ຫຼື ຫວຽດ.

**1**

**City Question 1 Context:**
This ballot question is asking voters to eliminate the Executive Committee, which is made up of City Council Members who represent their wards, and instead gives the Mayor more authority over all departments

**1**

**ບໍລິບົດຂອງຄຳຖາມຂັ້ນເມືອງທີ 1:**
ຄຳຖາມໃນບັດລົງຄະແນນນີ້ ຂໍໃຫ້ຜູ້ລົງຄະແນນສຽງຍົກເລີກຄະນະບໍລິຫານ,
ເຊິ່ງປະກອບດ້ວຍສະມາຊິກຄະນະກຳມະການຂັ້ນເມືອງຜູ້ແທນເຂດເມືອງຂອງເຂົາ,
ແລະມອບອຳນາດເພີ່ມອີກໃຫ້ແກ່ເຈົ້າເມືອງເປັນຜູ້ຄຸມທຸກພະແນກແທນ

### City Question 1
**Government Structure: Executive Mayor-Legislative Council**

Shall the Minneapolis City Charter be amended to adopt a change in its form of government to an Executive Mayor-Legislative Council structure to shift certain powers to the Mayor, consolidating administrative authority over all operating departments under the Mayor, and eliminating the Executive Committee?

YES _______ NO _______

### ຄຳຖາມຂັ້ນເມືອງທີ 1
**ໂຄງຮ່າງຣັດຖະບານ: ຄະນະບໍລິຫານ ເຈົ້າເມືອງ-ນິຕິບັນຍັດ**

ຈະໃຫ້ກົດບັດຂອງເມືອງມິນນີແອໂປລິສມີການດັດແປງເພື່ອທີ່ຈະຮັບການປ່ຽນຮູບແບບຂອງຣັດຖະບານເປັນໂຄງຮ່າງ
ຄະນະບໍລິຫານ ເຈົ້າເມືອງ-ນິຕິບັນຍັດ ເພື່ອທີ່ຈະມອບອຳນາດບາງຢ່າງໃຫ້ແກ່ເຈົ້າເມືອງ,
ໂດຍການຮວບຮວມອຳນາດດ້ານບໍລິຫານທຸກພະແນກມາຢູ່ໃຕ້ການປົກຄອງຂອງເຈົ້າເມືອງ, ແລະຍົກເລີກຄະນະບໍລິຫານໄປເລີຍ ບໍ?

ເຫັນດີ _______ ບໍ່ເຫັນດີ _______

2

**City Question 2 Context:**
This ballot question is asking Minneapolis voters to choose between keeping the Police Department as it is or to replace it with a Department of Public Safety that has a public health approach.

2

**ບໍລິບົດຂອງຄໍາຖາມຂັ້ນເມືອງທີ 2:**
ຄໍາຖາມໃນບັດລົງຄະແນນນີ້ ຂໍໃຫ້ຜູ້ລົງຄະແນນສຽງແຫ່ງເມືອງມິນນີແອໂປລິສ
ເລືອກລະຫວ່າງການເກັບກົມຕໍາລວດໄວ້ໃນຮູບແບບເດີມ ຫຼື
ຈະເອົາກົມຮັກສາຄວາມປອດໄພສາທາລະນະທີ່ໃຊ້ແນວຄິດທາງດ້ານສາທາລະນະສຸກເປັນຫຼັກແທນ.

## City Question 2

### Department of Public Safety

Shall the Minneapolis City Charter be amended to remove the Police Department and replace it with a Department of Public Safety that employs a comprehensive public health approach to the delivery of functions by the Department of Public Safety, with those specific functions to be determined by the Mayor and City Council by ordinance; which will not be subject to exclusive mayoral power over its establishment, maintenance, and command; and which could include licensed peace officers (police officers), if necessary, to fulfill its responsibilities for public safety, with the general nature of the amendments being briefly indicated in the explanatory note below, which is made a part of this ballot?

YES _______ NO _______

## ຄໍາຖາມຂັ້ນເມືອງທີ 2

### ກົມຮັກສາຄວາມປອດໄພສາທາລະນະ

ຈະໃຫ້ກົດບັດຂອງເມືອງມິນນີແອໂປລິສມີການດັດແປງເພື່ອທີ່ຈະຍົກເລີກກົມຕໍາລວດແລະເອົາກົມຮັກສາຄວາ
ມປອດໄພສາທາລະນະທີ່ໃຊ້ແນວຄິດທາງດ້ານສາທາລະນະສຸກເປັນຫຼັກແທນ
ເພື່ອທີ່ຈະປະຕິບັດການງານຂອງກົມຮັກສາຄວາມປອດໄພສາທາລະນະ, ດ້ວຍທີ່ວ່າການງານນັ້ນ
ຕ້ອງໄດ້ຕັດສັ່ງມາຈາກເຈົ້າເມືອງແລະຄະນະຂັ້ນເມືອງໂດຍການດໍາລັດ; ເຊິ່ງຈະບໍ່ຕົກໃຕ້ຂອບເຂດອໍານາດເຈົ້າເມືອງແລະຄະນະຂັ້ນເມືອງ
ໃນການຈັດຕັ້ງ, ການປົກຄອງ, ແລະການບັນຊາ ຢ່າງດຽວ; ແລະສາມາດຮວມດ້ວຍເຈົ້າໜ້າທີ່ຮັກສາຄວາມສັນຕິ
(ເຈົ້າໜ້າທີ່ຕໍາລວດນັ້ນເອງ) ນັ້ນ, ຖ້າວ່າຈໍາເປັນ, ເພື່ອຮັບຜິດຊອບໜ້າທີ່ຂອງຕົນສະເພາະເລື່ອງຄວາມປອດໄພສາທາລະນະ,
ດ້ວຍວ່າມີເນື້ອຄວາມທົ່ວໄປຂອງຂໍ້ດັດແປງເຫຼົ່ານີ້ບັນທຶກໄວ້ໃນຂໍ້ໝາຍເຫດຢູ່ຂ້າງລຸ່ມນີ້,
ເຊິ່ງໄດ້ປະກອບດ້ວຍສະບັບບັດລົງຄະແນນນີ້ແລ້ວ ບໍ?

ເຫັນດີ _______ ບໍ່ເຫັນດີ _______

**Explanatory Note:**
*This amendment would create a Department of Public Safety combining public safety functions through a comprehensive public health approach to be determined by the Mayor and Council. The department would be led by a Commissioner nominated by the Mayor and appointed by the Council. The Police Department, and its chief, would be removed from the City Charter. The Public Safety Department could include police officers, but the minimum funding requirement would be eliminated.*

**ໝາຍເຫດອະທິບາຍ:**
ຂໍ້ດັດແປງນີ້ ຄາດຈະສ້າງກົມຮັກສາຄວາມປອດໄພສາທາລະນະ
ໂດຍປະກອບການງານດ້ານການຮັກສາຄວາມປອດໄພສາທາລະນະ ດ້ວຍໃຊ້ແນວຄິດທາງດ້ານສາທາລະນະສຸກ
ທີ່ຕ້ອງຮັບການຕັດສິນຈາກເຈົ້າເມືອງແລະຄະນະຂັ້ນເມືອງ. ກົມນີ້ ຈະຖືກນໍາພາໂດຍຫົວໜ້າກໍາມະການ
ເຊິ່ງເຈົ້າເມືອງແລະຄະນະຂັ້ນເມືອງແມ່ນບັນດາຜູ້ເລືອກ. ກົມຕໍາລວດ, ແລະຫົວໜ້າຕໍາລວດ, ກໍຈະຖືກຕັດອອກຈາກກົດບັດຂອງເມືອງ.
ກົມຮັກສາຄວາມປອດໄພສາທາລະນະອາດມີເຈົ້າໜ້າທີ່ຕໍາລວດປະກອບຮ່ວມ, ແຕ່ຂໍ້ທີ່ໃຫ້ງົບປະມານຕໍ່າສຸດນັ້ນກໍຈະຖືກລົບລ້າງໄປ.

3

**City Question 3 Context:**
This ballot question is asking Minneapolis voters to authorize the City Council to regulate rent control on private residential property to make them more affordable.

3

**ບໍລິບົດຂອງຄໍາຖາມຂັ້ນເມືອງທີ 3:**
ຄໍາຖາມໃນບັດລົງຄະແນນນີ້ ຂໍໃຫ້ຜູ້ລົງຄະແນນສຽງແຫ່ງເມືອງມິນນີແອໂປລິສ
ອະນຸມັດໃຫ້ຄະນະຂັ້ນເມືອງຄວບຄຸມຄ່າເຊົ່າບ້ານສະເພາະຫຼັງເຮືອນທີ່ມີເຈົ້າຂອງເອກະຊົນ
ເພື່ອທີ່ຈະເຮັດໃຫ້ບ້ານເຊົ່າເຫຼົ່ານີ້ຕົກໃນລາຄາສົມເຫດສົມຜົນ.

## City Question 3
### Authorizing City Council To Enact Rent Control Ordinance

Shall the Minneapolis City Charter be amended to authorize the City Council to regulate rents on private residential property in the City of Minneapolis, with the general nature of the amendments being indicated in the explanatory note below, which is made a part of this ballot?

YES _______ NO _______

## ຄໍາຖາມຂັ້ນເມືອງທີ 3
### ການອະນຸມັດໃຫ້ຄະນະຂັ້ນເມືອງ ອອກຂໍ້ດໍາລັດວ່າດ້ວຍການຄວບຄຸມຄ່າເຊົ່າບ້ານ

ຈະໃຫ້ກົດບັດຂອງເມືອງມິນນີແອໂປລິສມີການດັດແປງເພື່ອທີ່ຈະອະນຸມັດໃຫ້ຄະນະຂັ້ນເມືອງຄວບຄຸມຄ່າເຊົ່າບ້ານ
ສະເພາະຫຼັງເຮືອນທີ່ມີເຈົ້າຂອງເອກະຊົນໃນເມືອງມິນນີແອໂປລິສ,
ດ້ວຍວ່າມີເນື້ອຄວາມທົ່ວໄປຂອງຂໍ້ດັດແປງເຫຼົ່ານີ້ບັນທຶກໄວ້ໃນຂໍ້ໝາຍເຫດຢູ່ຂ້າງລຸ່ມນີ້,
ເຊິ່ງໄດ້ປະກອບດ້ວຍສະບັບບັດລົງຄະແນນນີ້ແລ້ວ ບໍ?

ເຫັນດີ _______ ບໍ່ເຫັນດີ _______

**Explanatory Note:**
*This amendment would authorize the City Council to regulate rents on private residential property in the City of Minneapolis by ordinance.*

*Provide that an ordinance regulating rents on private residential property could be enacted in two different and independent ways:*
  a. *The City Council may enact the ordinance.*
  b. *The City Council may refer the ordinance as a ballot question to be decided by the voters for approval at an election. If more than half of the votes cast on the ballot question are in favor of its adoption, the ordinance would take effect 30 days after the election, or at such other time as provided in the ordinance.*

**ໝາຍເຫດອະທິບາຍ:**
ຂໍ້ດັດແປງນີ້ ຈະອະນຸມັດໃຫ້ຄະນະຂັ້ນເມືອງຄວບຄຸມຄ່າເຊົ່າບ້ານ ສະເພາະຫຼັງເຮືອນທີ່ມີເຈົ້າຂອງເອກະຊົນໃນເມືອງມິນນີແອໂປລິສໂດຍຂໍ້ດໍາລັດ.

ໃຫ້ຂໍ້ດໍາລັດກ່ຽວກັບການຄວບຄຸມຄ່າເຊົ່າບ້ານສະເພາະຫຼັງເຮືອນທີ່ມີເຈົ້າຂອງເອກະຊົນ
ອອກໄດ້ໃນສອງຮູບແບບທີ່ແຕກຕ່າງແລະບໍ່ກ່ຽວຂ້ອງກັນ:
  ກ. ອະນຸມັດໃຫ້ຄະນະຂັ້ນເມືອງອອກຂໍ້ດໍາລັດ.
  ຂ. ຄະນະຂັ້ນເມືອງຈະວາງຂໍ້ດໍາລັດເປັນຄໍາຖາມໃນບັດລົງຄະແນນໃຫ້ຜູ້ລົງຄະແນນນັ້ນ
  ເປັນຜູ້ຕັດສິນອະນຸມັດເມື່ອມີການເລືອກຕັ້ງແລ້ວ.
  ຖ້າມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຄະແນນສຽງກ່ຽວກັບຄໍາຖາມທີ່ລົງບັດລົງຄະແນນນັ້ນ ທີ່ເຫັນດີກັບການອະນຸມັດ,
  ຂໍ້ດໍາລັດຈະຕ້ອງໃຊ້ເວລາ 30 ວັນຫຼັງຈາກການເລືອກຕັ້ງ ຈົນກວ່າທີ່ຈະປະຕິບັດການໄດ້,
  ຫຼືໃນການເວລາທີ່ກໍານົດໄວ້ແລ້ວໃນຂໍ້ດໍາລັດນັ້ນ.